**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ ເລກທີ ............../ສທ

ນະຄອນຫຼວງວຽງຈັນ, ວັນທີ:

**ບົດສະຫຼຸບຫຍໍ້**
# ການຈັດຕັ້ງປະຕິບັດວຽກງານສາທາລະນະສຸກ 09 ເດືອນປີ 204 ແລະ ທິດທາງແຜນການ ປະຈຳປີ 2025

## I. ສະຫຼຸບການຈັດຕັ້ງປະຕິບັດວຽກງານສາທາລະນະສຸກ ໃນ 09 ເດືອນຕົ້ນປີ 2024

ການຈັດຕັ້ງປະຕິບັດແຜນພັດທະນາສາທາລະນະສຸກ ປະຈຳປີ 2024 ແມ່ນແນ່ໃສ່ການບັນລຸບັນດາຄາດໝາຍຂອງຂະແໜງການ, ຮັບປະກັນການສະໜອງການບໍລິການສຸຂະພາບຢ່າງທົ່ວເຖິງ, ມີຄຸນນະພາບ ແລະ ຍຸດຕິ ທຳ, ປະກອບສ່ວນໃຫ້ປະຊາຊົນບັນດາເຜົ່າທຸກຄົນມີສຸຂະພາບດີ, ມີອາຍຸຍືນສະເລ່ຍສູງ, ເຊິ່ງໃນໄລຍະ 09 ເດືອນຕົ້ນປີ 2024 ຜ່ານການຈັດຕັ້ງປະຕິບັດວຽກງານ ຕາມ 07 ສາຍແຜນງານຂອງກະຊວງ ສາມາດສັງລວມບັນດາວຽກງານທີ່ພົ້ນເດັ່ນ ໂດຍທຽບໃສ່ຄາດໝາຍ ແລະ ແຜນການ ໄດ້ໂດຍຫຍໍ້ ຄືດັ່ງລຸ່ມນີ້:

### 1. <u>ຜົນສຳເລັດພົ້ນເດັ່ນ ຕາມ 07 ແຜນງານ ໃນ 09 ເດືອນປີ 2024:</u>

### 1.1. ແຜນງານອະນາໄມ ແລະ ສົ່ງເສີມສຸຂະພາບ:

ໄດ້ເອົາໃຈໃສ່ໃນວຽກງານໂຄສະນາ ສຸຂະສຶກສາໃຫ້ຄວາມຮູ້ແກ່ປະຊາຊົນ ດ້ວຍຫຼາຍຊ່ອງທາງ ເພື່ອຫັນປ່ຽນທັດສະນະແນວຄິດ ແລະ ມີວິຖີການດຳລົງຊີວິດທີ່ຖືກຕ້ອງກັບຫຼັກສຸຂະອານາໄມ, ເອົາໃຈໃສ່ວຽກງານການສະໜອງນ້ຳສະອາດ ແລະ ການຊົມໃຊ້ວິດຖ່າຍຄອບຄົວ, ການສ້າງບ້ານສາທາລະນະສຸກແບບຢ່າງ, ການລົງເຄື່ອນທີ່ແບບເຊື່ອມສານຢູ່ໃນເຂດຫ່າງໄກສອກຫຼີກ, ວຽກງານຮັກສຸຂະພາບແມ່ ແລະ ເດັກ ແລະ ວຽກງານໂພຊະນາການ ເຊິ່ງໃນໄລຍະ 09 ເດືອນປີ 2024 ນີ້ສາມາດສັງລວມຜົນໄດ້ຮັບພົ້ນເດັ່ນ ຄື:

- ສຳເລັດການຈັດຕັ້ງປະຕິບັດວັນສັກຢາກັນພະຍາດແຫ່ງຊາດ (ວສຊ) ໝາກແດງໃຫຍ່ ແລະ ໝາກແດງນ້ອຍໃນຂອບເຂດທົ່ວປະເທດ, ສາມາດບັນລຸອັດຕາປົກຄຸມໝາກແດງ ໄດ້ 95.2%;
- ການບໍລິການ ແມ່ ແລະ ເດັກ ເປັນຕົ້ນ: ການກວດກ່ອນເກີດຄັ້ງທີ່ 1 ໄດ້ 62,2%, ການກວດກ່ອນເກີດຄັ້ງທີ່ 4 ໄດ້ 37,9%, ການກວດຫຼັງເກີດລູກ (ພາຍໃນ 2 ວັນ) ໄດ້ 40,6%, ການວາງແຜນຄອບຄົວ ໄດ້ 29,44%; ເດັກຮັບຢາວັກຊີນ BCG ໄດ້ 45.5%;
- ຈັດກອງປະຊຸມດ້ານວິຊາການກະກຽມຮ່ວມກັບທີມງານກາວີ ແລະ ຄູ່ຮ່ວມພັດທະນາເພື່ອປຶກສາຫາລືຮ່າງຍຸດທະສາດວຽກງານວັກຊີນກັນພະຍາດສຳລັບຕົວເມືອງເທດສະບານທີ່ມີບັນຫາອັດຕາການສັກຢາກັນພະຍາດຕ່ຳ ແລະ ສຳເລັດ

ຮ່າງຍຸດທະສາດຕົວເມືອງໃຫຍ່ ໃນວຽກງານສັກຢາວັກຊີນກັນພະຍາດ ແລະ ໄດ້ປັບປຸງຄູ່ມືຍຸດທະສາດການບໍລິການໃນຈຸດຄົງທີ່ ແລະ ເຄື່ອນທີ່;

- ຈັດກອງປະຊຸມປະສານງານກັບຫຼາຍພາກສວ່ນ ເພື່ອກະກຽມໃສ່ຂະບວນການສັກວັກຊີນປ້ອງກັນມະເຮັງປາກມົດລູກ ໃນກຸ່ມເປົ້າໝາຍ ອາຍຸ 10 ປີ ໃນໂຮງຮຽນ ແລະ ຊຸມຊົນ
- ຈັດກອງປະຊຸມຊີ້ແຈ້ງນິຕິກຳລຸ່ມກົດໝາຍວ່າດ້ວຍການຊົດເຊີຍກໍລະນີພິການ ຫຼື ເສຍຊີວິດຍ້ອນເຫດການປະຕິກິລິຍາຫຼັງການໃຫ້ວັກຊີນກັນພະຍາດຕໍ່ລັດຖະມົນຕີກະຊວງສາທາລະນະສຸກ, ທີ່ໂຮງແຮມດອນຈັນພາເລດ;
- ວຽກງານຊຸມຊົນເປັນເຈົ້າດ້ານສຸຂາອານາໄມ (ຊຈສ) ມາຮອດເດືອນກັນຍາ ປີ 2024 ສາມາດປະກາດການຢຸດຕິຖ່າຍຊະຊາຍໄດ້ທັງໝົດ 10 ແຂວງ (VTC, VTP, BKX, HP, CPS, SLV, SEK, BOK, ATP, XYL), 135 ເມືອງ ແລະ 8,276 ບ້ານ;
- ໄດ້ສຸມໃສ່ໃນການຈັດຕັ້ງປະຕິບັດບັນດາວຽກງານໂພຊະນາການ ເຊິ່ງມາຮອດເດືອນກັນຍາປີ 2024 ເຫັນວ່າ 23.8% ຂອງເດັກເກີດໃໝ່ ແມ່ນໄດ້ກິນນົມແມ່ພາຍໃນໜຶ່ງຊົ່ວໂມງທຳອິດຫຼັງເກີດ (ຄາດໝາຍ 55%) ແລະ 68% ຂອງແມ່ຍິງຖືພາ ໄດ້ຮັບທາດເຫຼັກ-ອາຊິດໂຟລິກ (IFA) ຢ່າງໜ້ອຍ 90 ເມັດ (ຄາດໝາຍ 69%); ນອກຈາກນັ້ນ, ກໍ່ສຳເລັດກອງປະຊຸມສຸດຍອດວ່າດ້ວຍຊັບສິນດ້ານມະນຸດ ຄັ້ງທີ II ປີ 2024 ຂອງ ສປປ ລາວ ແລະ ກອງປະຊຸມຄະນະກຳມະການໂພຊະນາການແຫ່ງຊາດ 6 ເດືອນ 2024;

### 1.2. ແຜນງານກັນພະຍາດ ແລະ ຄວບຄຸມພະຍາດຕິດຕໍ່:

- ເອົາໃຈໃສ່ການກະກຽມຄວາມພ້ອມໃນການໂຕ້ຕອບ ແລະ ແກ້ໄຂການລະບາດຂອງພະຍາດ ທີ່ເກີດຂຶ້ນຕາມລະດູການ ແລະ ເຫດການສຸກເສີນດ້ານສາທາລະນະສຸກ ໂດຍມີຕາໜ່າງລະບົບເຝົ້າລະວັງກວມທຸກແຂວງ ແລະ ເມືອງ ທົ່ວປະເທດ, ມີລະບົບເຝົ້າລະວັງ 19 ພະຍາດ/ອາການ ພາຍໃຕ້ລະບົບເຝົ້າລະວັງປະຈຳອາທິດ ຈາກລະບົບ DHIS2 ແລະ ມີກົນໄກການປະສານງານລະຫວ່າງສູນ ແລະ ແຂວງ ໃນການຕິດຕາມຂໍ້ມູນຂ່າວສານ ແລະ ລາຍງານຜ່ານການຈັດຕັ້ງປະຕິບັດຫ້ອງປະຕິບັດງານສຸກເສີນ (EOC, PHOEC) ຢ່າງເປັນປົກກະຕິ;
- ເອົາໃຈໃສ່ສ້າງຄວາມເຂັ້ມແຂງລະບົບເຝົ້າລະວັງ ໂດຍໄດ້ສືບຕໍ່ກໍ່ສ້າງນັກລະບາດວິທະຍາພາກສະໜາມ ລຸ້ນທີ 15, ປະຈຸບັນມີນັກລະບາດວິທະຍາ 105 ທ່ານ; ຈັດກອງປະຊຸມປຶກສາຫາລືກ່ຽວກັບການຮ່າງຄູ່ມືການເຝົ້າລະວັງພະຍາດ ວໍ້ໃນຊຸມຊົນ, ກອງປະຊຸມພັດທະນາຄູ່ມືໃນການຈັດຕັ້ງປະຕິບັດການຄຸ້ມຄອງເຫດການສຸກເສີນດ້ານສາທາລະນະສຸກ ຢູ່ ສປປ ລາວ,
- ຕິດຕາມ, ເຝົ້າລະວັງສະພາບການລະບາດຂອງພະຍາດຕ່າງໆ ໂດຍໄດ້ລົງສອບສວນ ແລະ ເກັບຕົວຢ່າງກໍລະນີເຫດການຜິດປົກກະຕິຕ່າງໆ ທີ່ເກີດຂຶ້ນໃນຊຸມຊົນໃນຂອບເຂດທົ່ວປະເທດ ເຊັ່ນ: ການລະບາດກໍລະນີສົງໄສພະຍາດໄຂ້ເລືອດດຳ ຢູ່ແຂວງສາລະວັນ ແລະ ແຂວງຈຳປາສັກ, ການລະບາດກໍລະນີສົງໄສພະຍາດຄໍຕີບ ຢູ່ນະຄອນຫຼວງວຽງຈັນ ແລະ ແຂວງຫຼວງພະບາງ, ການລະບາດກໍລະນີສົງໄສພະຍາດໄອໄກ່ຢູ່ແຂວງຫຼວງພະບາງ,ອຸດົມໄຊ, ໄຊຍະບູລີ ແລະ ສະຫວັນນະເຂດ, ການລະບາດກໍລະນີສົງໄສພະຍາດສະໝອງອັກເສບຍີ່ປຸ່ນ ຢູ່ແຂວງຫຼວງພະບາງ;
- ປະຕິບັດມາດຕະການຄວບຄຸມພະຍາດໄຂ້ຍຸງລາຍ, ໄດ້ຈັດສົ່ງຢາຂ້າໝອນນໍ້າໃຫ້ບັນດາແຂວງທີ່ມີກໍລະນີຕິດເຊື້ອພະຍາດໄຂ້ຍຸງລາຍສູງ; ສ້າງຂະບວນການ ທຳລາຍແຫຼ່ງເພາະພັນຍຸງລາຍໂດຍການມີສ່ວນຮ່ວມຂອງຊຸມຊົນ ເຊິ່ງຈັດຕັ້ງຢູ່ 9 ແຂວງ, ເປັນຈຳນວນ 502 ຄັ້ງ ຜູ້ເຂົ້າຮ່ວມທັງໝົດ 9,550 ເທື່ອຄົນ;

- ສືບຕໍ່ປະຕິບັດຕາມ 3 ມາດຕະການ ແລະ 2 ອົງປະກອບ ໃນການຄວບຄຸມພະຍາດໄຂ້ມາລາເຣຍ ໂດຍປັບປຸງການເຂົ້າເຖິງການບົ່ງມະຕິ ແລະ ປິ່ນປົວ ແຕ່ຫົວທີ-ມີປະສິດທິພາບ ໃນບ້ານເຂດ 3-4 ແລະ ພາກເອກະຊົນ (PPM); ໄດ້ແຈກມຸ້ງເຄືອບຢາຍາວນານໃຫ້ແກ່ກຸ່ມສ່ຽງຢ່າງທົ່ວເຖິງ ແລະ ອອກແຮງໂຄສະນາປຸກລະດົມຊຸມຊົນໂດຍສະ ເພາະວິທີປ້ອງກັນໄຂ້ຍຸງ; ລືມທຽບຂໍ້ມູນການລາຍງານຈາກລະບົບ DHIS2 ໃນເດືອນ 1-8 ປີ 2023 ແລະ ປີ 2024 ໂດຍລວມເຫັນວ່າຈຳນວນກໍລະນີຫຼຸດ 62 %, ໃນນັ້ນ ຊະນິດເຊື້ອ P.f ຫລຸດລົງ 26% ແລະ P.v ຫລຸດລົງ 52%;

- ເອົາໃຈໃສ່ວຽກງານຕ້ານເອດ ເຊິ່ງມາຮອດປະຈຸບັນມີສະຖານທີ່ການໃຫ້ຄຳປຶກສາກວດເລືອດເພື່ອຊອກຫາເຊື້ອເຮສໄອວີ ແບບສະໝັກໃຈ 196 ແຫ່ງ, ມີສູນປິ່ນປົວດ້ວຍຢາຕ້ານເຊື້ອເຮສໄອວີ (ARV) 11 ແຫ່ງ ແລະ ຈຸດບໍລິການໃຫ້ຢາປິ່ນປົວເຮສໄອວີ 13 ແຫ່ງ ເພື່ອອຳນວຍຄວາມສະດວກໃນການເຂົ້າເຖິງການປິ່ນປົວ; ການບໍລິການປິ່ນປົວພະຍາດຕິດຕໍ່ທາງເພດສຳພັນແຕ່ເດືອນ ມັງກອນ ຫາ ພຶດສະພາ 2024 ມີຈຳນວນຜູ້ທີ່ຖືກບົ່ງມະຕິວ່າເປັນ ພຕພ ທັງໝົດ ແມ່ນ 4.674 ກໍລະນີ , ໄດ້ກວດເລືອດເພື່ອຊອກຫາການຕິດເຊື້ອເຮສໄອວີ 226 ກໍລະນີ, ພົບຈຳນວນທີ່ຕິດເຊື້ອເຮສໄອວີ 6 ກໍລະນີ;

- ລົງຊອກຄົ້ນຄືນເຈັບວັນນະໂລກກັບທີ່ ຢູ່ບັນດາແຂວງ ຄື: ແຂວງອຸດົມໄຊ ມີຜູ້ເຂົ້າຮ່ວມ 1,346 ກໍລະນີ, ຂຶ້ນທະບຽນປິ່ນປົວ 339 ກໍລະນີ; ແຂວງໄຊຍະບູລີ ມີຜູ້ເຂົ້າຮ່ວມ 1,014 ກໍລະນີ, ຂຶ້ນທະບຽນປິ່ນປົວ 59 ກໍລະນີ; ແຂວງວຽງຈັນ ມີຜູ້ເຂົ້າຮ່ວມ 1,949 ກໍລະນີ, ຂຶ້ນທະບຽນປິ່ນປົວ 126 ກໍລະນີ ແລະ ແຂວງຄຳມ່ວນ ມີຜູ້ເຂົ້າຮ່ວມ 372 ກໍລະນີ , ຂຶ້ນທະບຽນປິ່ນປົວ 29 ກໍລະນີ;

- ສຳເລັດການຈັດຊຸດອົບຮົມກ່ຽວກັບວຽກງານຄວບຄຸມວັນນະໂລກໃຫ້ແກ່ຜູ້ຮັບຜິດຊອບວຽກວັນນະໂລກຂັ້ນແຂວງ, ຂັ້ນເມືອງ ທີ່ແຂວງ ຊຽງຂວາງ.

### 1.3. ແຜນງານປິ່ນປົວ ແລະ ຟື້ນຟູໜ້າທີ່ການ:

ໄດ້ສຸມໃສ່ປັບປຸງ ແລະ ຍົກລະດັບຄຸນນະພາບຂອງການສະໜອງບໍລິການສຸຂະພາບ ໃຫ້ປະຊາຊົນບັນດາເຜົ່າ ຢ່າທົ່ວເຖິງ ໂດຍການຍົກລະດັບພື້ນຖານໂຄງລ່າງຂອງໂຮງໝໍຂັ້ນຕ່າງໆໃຫ້ມີຄຸນນະພາບ ແລະ ໃຫ້ໄດ້ມາດຖານຕາມທີ່ກະຊວງໄດ້ວາງອອກ, ປະກອບຢາ-ອຸປະກອນການແພດທີ່ຈຳເປັນ, ປັບປຸງການບໍລິການຕາມນະໂຍ ບາຍ 5 ດີ, 1 ພໍໃຈ ໃຫ້ມີຮູບປະທຳ ແລະ ມີຜົນສຳເລັດກວ່າເກົ່າ ເຊິ່ງໃນໄລຍະ 9 ເດືອນປີ 2024, ການພັດທະນາວຽກງານບໍລິການສຸຂະພາບ ໄດ້ມີຜົນສຳເລັດ ຄື:

- ສືບຕໍ່ກໍ່ສ້າງ ຍົກລະດັບພື້ນຖານໂຄງລ່າງ ທັງຢູ່ສູນກາງ & ທ້ອງຖິ່ນ ໂດຍສືບຕໍ່ການກໍ່ສ້າງໂຮງໝໍມະໂຫສົດ ໄລຍະ 2 ສຳເລັດ 100%, ຕິດຕາມການກໍ່ສ້າງໂຮງໝໍແຂວງ, ໂຮງໝໍເມືອງ ແລະ ສຸກສາລາ ຕາມແຜນການ;

- ລະບົບການບໍລິການປິ່ນປົວນັບແຕ່ຂັ້ນສູນກາງຮອດທ້ອງຖິ່ນ, ປະຈຸບັນມີ ໂຮງໝໍສູນກາງ 5 ແຫ່ງ, ສູນປິ່ນປົວ 4 ແຫ່ງ, ໂຮງໝໍແຂວງ 17 ແຫ່ງ, ໂຮງໝໍເມືອງ 135 ແຫ່ງ, ໃນນັ້ນໂຮງໝໍເມືອງປະເພດ ກ 35 ແຫ່ງ (3 ແຫ່ງ ແມ່ນແຂວງຊ່ວຍການບໍລິການຜ່າຕັດສຸກເສີນ ຄື: ລ້ອງຊານ, ຕະໂອ້ຍ ແລະ ດາກຈຶງ), ໂຮງໝໍເມືອງທີ່ມີຕູ້ເລືອດ 30 ແຫ່ງ , ສຸກສາລາ 1.080 ແຫ່ງ;

- ພັດທະນາຄຸນນະພາບ ແລະ ມາດຕະຖານການບໍລິການສຸຂະພາບ ໂດຍໄດ້ສຳເລັດກອງປະຊຸມປະຈຳປີ 2024 ວຽກງານ 5 ດີ 1 ພໍໃຈ ທົ່ວປະເທດ; ສຳເລັດວິເຄາະຂໍ້ມູນໃນແບບຟອມປະເມີນວຽກງານຄຸນນະພາບ ການບໍລິການປິ່ນປົວ 5 ດີ 1 ພໍໃຈ ຂອງຂັ້ນເມືອງ;

- ສໍາເລັດການຝຶກອົບຮົມການຫັນໂຮງໝໍເປັນໂຮງໝໍກຸ້ມຕົນເອງໃຫ້ແກ່ 08 ແຂວງ (ໂຮງໝໍແຂວງອຸ ດົມໄຊ, ຫຼວງພະບາງ, ສະຫວັນນະເຂດ,ຈໍາປາສັກ, ຊຽງຂວາງ, ແຂວງວຽງຈັນ, ຄໍາມ່ວນ ແລະ ບໍລິຄໍາໄຊ);
- ເອົາໃຈໃສ່ໃນການຄຸ້ມຄອງບໍລິການພາກເອກະຊົນ ເຊິ່ງໄດ້ສໍາເລັດການຈັດລຽງຮ່າງນິຕິກໍາຂໍ້ຕົກລົງໂຮງໝໍເອກະຊົນ, ສູນການແພດເອກະຊົນ, ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດ ດໍາ ລັດວ່າດ້ວຍໂຮງໝໍເອກະຊົນ 1333/ສທ, ແລະ ຂໍ້ຕົກລົງວ່າດ້ວຍການເຄື່ອນໄຫວຫ້ອງກວດພະຍາດເອກະຊົນ ເລກທີ 576/ສທ; ຄົ້ນຄວ້າເອກະສານຄໍາຮ້ອງຂໍເປີດຫ້ອງກວດພະຍາດເອກະຊົນ ຈໍານວນ 560 ສະບັບ (ແຂວງ 415 ສະບັບ, ນະຄອນຫຼວງວຽງຈັນ 145ສະບັບ) ແລະ ຕໍ່ໃບອະນຸຍາດຫ້ອງກວດພະຍາດເອກະຊົນ ຈໍານວນ 65 ສະບັບ (ແຂວງ 32 ສະບັບ, ນະຄອນຫຼວງວຽງຈັນ 33 ສະບັບ);
- ເອົາໃຈໃສ່ໃນການສະໜອງອຸປະກອນການແພດ ແລະ ລົດນໍາສົ່ງຄົນເຈັບໃຫ້ໂຮງໝໍຂັ້ນຕ່າງໆ ໂດຍໄດ້ສະໜອງໂຕະຜ່າຕັດ 2 ເຄື່ອງໃຫ້ໂຮງໝໍເມືອງຊໍາໃຕ້, ແຂວງຫົວພັນ; ເຄື່ອງ Gene Expert ໃຫ້ໂຮງໝໍແຂວງບໍລິຄໍາໄຊ; ຕຽງເຫຼັກພັບ 250 ຕຽງ ໃຫ້ໂຮງໝໍສະໜາມເມືອງໄຊຍະບູລີ, ໂຮງໝໍເມືອງປາກລາຍ ແລະ ເມືອງຫົງສາ, ແຂວງໄຊຍະບູລີ; ເຄື່ອງ ECG 01 ເຄື່ອງ ໃຫ້ແກ່ໂຮງໝໍແຂວງຫົວພັນ; ແບ່ງປັນ Puls oxymeter 50 ເຄື່ອງ ໃຫ້ໂຮງໝໍເມືອງເປົ້າໝາຍ ນໍາໃຊ້ເຂົ້າໃນວຽກງານປິ່ນປົວ;
- ສໍາເລັດດໍາເນີນເອກະສານກະກຽມພິທີມອບ-ຮັບອຸປະກອນການແພດໃຊ້ໃນເດັກເກີດໃຫມ່ NICU ໃຫ້ໂຮງຫມໍມະໂຫສົດ,ໂຮງຫມໍແຂວງສະຫວັນນະເຂດ ແລະ ໂຮງຫມໍແຂວງຄໍາມ່ວນ ທີ່ໄດ້ຮັບການສະຫນັບສະຫນູນຈາກອົງການ Unicef;
- ວຽກງານກັນ ແລະ ຄວບຄຸມພະຍາດບໍ່ຕິດຕໍ່ ໄດ້ລົງເຜີຍແຜ່ໃຫ້ຄວາມຮູ້ ກ່ຽວກັບຜົນຮ້າຍຂອງການນໍາໃຊ້ສານເສບຕິດ ຢູ່ໃນຊຸມຊົນ ແລະ ໂຮງຮຽນ ໃນ 9 ເມືອງຂອງນະຄອນຫຼວງວຽງຈັນ, 5 ເມືອງ ຂອງແຂວງວຽງຈັນ ແລະ 3 ເມືອງ ຂອງແຂວງຄໍາມ່ວນ, ມີຜູ້ເຂົ້າຮ່ວມທັງໝົດ 3,400 ຄົນ; ສໍາເລັດກອງປະຊຸມປຶກສາຫາລືກ່ຽວກັບວຽກງານປິ່ນປົວ ແລະ ບໍາບັດຜູ້ຕິດສິ່ງເສບຕິດແບບມີສ່ວນຮ່ວມຂອງຊຸມຊົນ ແລະ ກອງປະຊຸມແນະນໍາປຶ້ມຄູ່ມື ການປ້ອງກັນການນໍາໃຊ້ສານເສບຕິດແບບຄົບຊຸດ ທີ່ ນະຄອນຫຼວງວຽງຈັນ;
- ປັບປຸງຄືນມາດຕະຖານຂອງສາຖານທີ່ບໍລິການສາທາລະນະສຸກ ເປັນຕົ້ນແມ່ນມາດຕະຖານໂຮງໝໍແຂວງ, ໂຮງໝໍເມືອງ, ສຸກສາລາ;
- ສໍາເລັດການປັບປຸງຕົວຊີບອກປະກັນສຸຂະພາບໃນບັດປະເມີນຄຸນນະພາບ ໃນໂຄງການ HANSA II ດັດແກ້ (Quality Performance Ssore Care (QPS)

### 1.4. ແຜນງານປົກປ້ອງຜູ້ບໍລິໂພກອາຫານ, ຢາ ແລະ ຜະລິດຕະພັນການແພດ:

ໄດ້ຖືສໍາຄັນຕໍ່ວຽກງານປົກປ້ອງສຸຂະພາບຂອງຜູ້ບໍລິໂພກ ອາຫານ, ຢາ ແລະ ຜະລິດຕະພັນການແພດ ໂດຍເອົາໃຈໃສ່ຮັບປະກັນຄວາມປອດໄພ ແລະ ຄຸນນະພາບອາຫານ, ຢາ ແລະ ຜະລິດຕະພັນການແພດ ທີ່ຜະລິດ, ນໍາເຂົ້າ, ຈໍລະຈອນຈໍາໜ່າຍ ຢູ່ທ້ອງຕະຫຼາດ, ຮັບປະກັນການສະໜອງຢາ ແລະ ອຸປະກອນການແພດໃຫ້ສະຖານທີ່ບໍລິການຂັ້ນຕ່າງໆ ໂດຍໄດ້ຈັດຕັ້ງປະຕິບັດວຽກງານຈຸດສຸມ ຄື:

- ເອົາໃຈໃສ່ຕິດຕາມ, ເຝົ້າລະວັງ ແລະ ແກ້ໄຂ ການລະເມີດໂຄສະນາ ທີ່ມີລັກຊະນະໂອ້ອວດສັບພະຄຸນ ເກີນຄວາມເປັນຈິງ ຜ່ານສື່ອອນລາຍ ຫຼື ດ້ວຍວິທີການອື່ນໆ ເຊິ່ງເປັນການຫຼອກລວງຜູ້ບໍລິໂພກ;
- ສົ່ງເສີມການຜະລິດພາຍໃນ ໃຫ້ເຂັ້ມແຂງ, ເຮັດໃຫ້ການຜະລິດອາຫານ, ຢາ ແລະ ຜະລິດຕະພັນການແພດ ສາມາດບັນລຸຕາມຕາດຕະຖານການຜະລິດທີ່ດີ (GMP) ສາມາດຕອບສະໜອງຄວາມຕ້ອງການພາຍໃນ ແລະ ສົ່ງອອກຈຳນວນໜຶ່ງ. ປະຈຸບັນມີໂຮງງານຜະລິດ ໄດ້ຮັບການຢັ້ງຢືນ ການປະຕິບັດຫຼັກການຜະລິດຢາທີ່ດີ ຈຳນວນ 07 ແຫ່ງ; ມີໂຮງງານຜະລິດອາຫານ ຈຳນວນ 45 ແຫ່ງ ທີ່ໄດ້ຮັບ ການໄດ້ຮັບການຢັ້ງຢືນ GMP/HACCP ແລະ ມາດຕະຖານສາກົນ ISO 22000;
- ສຳເລັດການປັບປຸງບັນຊີຢາຈຳເປັນພື້ນຖານແຫ່ງຊາດ ໝວດທີ 25,26,27 ແລະ ໝວດຢາພື້ນເມືອງ;
- ໄດ້ເອົາໃຈສົ່ງເສີມການນຳໃຊ້ຢາພື້ນເມືອງ ສົມທົບກັບຢາຫຼວງ ໃນການຮັກສາສຸຂະພາບ, ກຳນົດຜະລິດຕະພັນຢາພື້ນເມືອງເຂົ້າໃນບັນຊີຢາຈຳເປັນພື້ນຖານແຫ່ງຊາດ ເພື່ອສົ່ງເສີມໃຫ້ມີການນຳໃຊ້ຫຼາຍຂຶ້ນ;
- ເອົາໃຈໃສ່ພັດທະນາວຽກງານວິໄຈອາຫານ ແລະ ຢາ ໂດຍໄດ້ຮັບການຮັບຮອງມາດຕະຖານສາກົນ ISO/IEC 17025 ດ້ານການວິໄຈອາຫານຈຸລິນຊີໃນນ້ຳດື່ມ ແລະ ອາຫານ 6 ຊະນິດເຊື້ອພະຍາດ; ກຽມຄວາມພ້ອມເພື່ອຂໍການຢັ້ງຢືນ WHO PQ ໄດ້: 70% (ຄາດໝາຍ 80%); ໄດ້ຮັບຕົວຢ່າງ (ຢາຫຼວງ, ຢາພື້ນເມືອງ, ເຄື່ອງສຳອາງ ແລະ ອຸປະກອນການແພດ) ທັງໝົດ 469 ຕົວຢ່າງ, ວິໄຈສຳເລັດ 279 ຕົວຢ່າງ; ຕົວຢ່າງຢາເສບຕິດ, ຮັບເຂົ້າມາວິໄຈລວມທັງໝົດ 2,481ຕົວຢ່າງ ກວດສຳເລັດ 100 %;
- ຄຸ້ມຄອງຢາເສບຕິດ, ສານເສບຕິດ, ວັດຖຸອອກລິດຕໍ່ຈິດປະສາດ ແລະ ເຄມີຕົ້ນຜ່ານຮ່າງເນື້ອໃນປັບປຸງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຢາ ຫຼື ສານເສບຕິດ, ອອກລິດຕໍ່ຈິດປະສາດ ແລະ ສານເຄມີຕົ້ນ ສະບັບເລກທີ 456/ກສຊ, ລົງວັນທີ 19 ເມສາ 2006;
- ພັດທະນາວຽກງານສະໜອງຢາ - ອຸປະກອນການແພດ ໂດຍໄດ້ຈ່າຍເຄື່ອງທົ່ວໄປອອກສາງ ຈຳນວນ 283 ຄັ້ງ, ຈຳນວນແກັດ 10.910 ແກັດ;
- ລົງຕິດຕາມ, ກວດກາ ແລະ ຊຸກຍູ້ ໂຮງງານຜະລິດອາຫານ ແລະ ນ້ຳດື່ມ ຈຳນວນ 19 ແຫ່ງ ແລະ ມີນິມາກ ຈຳນວນ 05 ແຫ່ງ, ໃນນະຄອນຫຼວງວຽງຈັນ; ລົງຕິດຕາມກວດກາຮ້ານຂາຍຢາໃນນະຄອນຫຼວງວຽງຈັນ ຈຳນວນ 23 ຮ້ານ; ສະຖິຕິກວດກາ ການນຳເຂົ້າອາຫານ ແລະ ຢາ ທັງໝົດ 03 ດ່ານສາກົນ ( ດ່ານສະໜາມບິນວັດໄຕ, ດ່ານທ່າບົກ - ທ່ານາແລ້ງ) ຈຳນວນ 256 ຄັ້ງ, 4,909 ລາຍການ, ນ້ຳໜັກ 42,828,944 (Kg), ມູນຄ່າ 28,223,879 ($).
- ນຳສະເໜີຜ່ານ (ຮ່າງ) ກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 20 ມິຖຸນາ 2024 ແລະ ໄດ້ສ້າງ, ປັບປຸງ ແລະ ສຳເລັດ ນິຕິກຳລຸ່ມກົດໝາຍຈຳນວນ 9 ສະບັບ; ຮັບຮອງແຜນຍຸດທະສາດແຫ່ງຊາດດ້ານການແພດ ແລະ ການຢາພື້ນເມືອງ ປີ 2024-2030;
- ສຳເລັດການຮັບໃຊ້ ແລະ ເຝົ້າລະວັງອຄວາມປອດໄພຂອງອາຫານ ກອງປະຊຸມລະດັບໜ່ວຍງານອາຊຽນ +3 (Asean+3 Task Force) ແລະ ກອງເລຂາ ATF 2024 ທີ່ນະຄອນຫຼວງວຽງຈັນ ແລະ ແຂວງຫຼວງພະບາງ ແລະ ກອງປະຊຸມອື່ນໆທີ່ ສປປ ລາວ ເປັນເຈົ້າພາບ ຢ່າງມີຄວາມປອດໄພ;

### 1.5. ແຜນງານຄຸ້ມຄອງ, ພັດທະນາພະນັກງານ ແລະ ຄົ້ນຄວ້າວິທະຍາສາດສາທາລະນະສຸກ:

- ສຳເລັດການຄົ້ນຄ້ວາພາລະບົດບາດຂອງບັນດາກົມກອງອ້ອມຂ້າງກະຊວງສາທາລະນະສຸກ ປະຈຸບັນສຳເລັດແລ້ວ 26 ພາກສ່ວນກວມ 60 %; ສຳເລັດກຳນົດຕຳແໜ່ງງານ 22 ພາກສ່ວນ ເທົ່າກັບ 51% ຂອງທັງໝົດກົມກອງອ້ອມຂ້າງກະຊວງສາທາລະນະສຸກ (43 ພາກສ່ວນ);
- ວຽກງານຄຸ້ມຄອງ, ພັດທະນາ ແລະ ນຳໃຊ້ ພະນັກງານ-ລັດຖະກອນສາທາລະນະສຸກ ໄດ້ສຳເລັດການເຜີຍແຜ່ຍຸດທະສາດພັດທະນາຊັບພະຍາກອນມະນຸດສາທາລະນະສຸກ ຮອດປີ 2030 ໄດ້ສຳເລັດ ຢູ່ 18 ແຂວງທົ່ວປະເທດ; ສຳເລັດການຝຶກອົບຮົມລະບົບນຳໃຊ້ຖານຂໍ້ມູນ ພະນັກງານ-ລັດຖະກອນ ຈາກລະບົບ PIMSv2 ເຂົ້າລະບົບ DHIS2 ຈຳນວນ 12 ແຂວງ;
- ປະຈຸບັນກະຊວງສາທາລະນະສຸກມີລັດຖະກອນທັງໝົດ 19, 316 ຄົນ, ຍິງ 12,693 ຄົນ, ໃນນັ້ນມີລັດຖະກອນຄູ 366 ຄົນ, ຍິງ 217 ຄົນ, ໃນນັ້ນຂັ້ນສູນກາງມີ 3,487 ຄົນ, ຍິງ 2,344 ຄົນ, ຢູ່ຂັ້ນແຂວງມີ 1,537 ຄົນ, ຍິງ 839 ຄົນ, ໂຮງໝໍແຂວງ 2,895 ຄົນ, ຍິງ 2,151 ຄົນ, ຂັ້ນເມືອງມີ 7,128 ຄົນ, ຍິງ 4,480 ຄົນ, ຂັ້ນສຸກສາລາມີ 3,860 ຄົນ,ຍິງ 2,614 ຄົນ, ຂັ້ນບ້ານ 56 ຄົນ, ຍິງ 28 ຄົນ;
- ບັນຈຸລັດຖະກອນໃໝ່ທົ່ວປະເທດປີ 2024 ຈຳນວນ 221 ຄົນ ຍິງ 135 ຄົນ, ຂັ້ນສູນກາງ 20 ຄົນ, ຍິງ 16 ຄົນ (9.05%), ຂັ້ນແຂວງ 46 ຄົນ, ຍິງ 26 ຄົນ (20.8%), ຂັ້ນເມືອງ 62 ຄົນ, ຍິງ 39 ຄົນ (42.08%)ແລະ ຂັ້ນສຸກສາລາ 93 ຄົນ, ຍິງ 80 ຄົນ (42.08%);
- ອະນຸມັດອອກໃນຮູບການຕ່າງໆ 459 ຄົນໃນນັ້ນ , ຮັບອຸດໜູນບຳນານ 261 ຄົນຄື: ຂັ້ນສູກາງ 35 ຄົນ ແລະ ຂັ້ນທ້ອງຖິ່ນ 212 ຄົນ, ອອກສ້າງເສດຖະກິດຄອບຄົວ 100 ຄົນ;
- ສຳເລັດຮັບພະນັກງານ ແລະ ນັກສຶກສາເຂົ້າຮຽນໃນສະຖານການສຶກສາສາທາລະນະສຸກ ພາຍໃນປະເທດ 226 ຄົນ; ພະນັກງານ-ລັດຖະກອນ ທີ່ສຳເລັດການສຶກສາ ແລະ ໄດ້ສົ່ງກັບຄືນກົມກອງ ພາຍໃນປະເທດມີຊ່ຽວຊານຂັ້ນ 1 ຈຳນວນ 25 ຄົນ, ປະລິນຍາຕີ 126 ຄົນ, ອາຍຸປະລິນຍາ(ຕໍ່ເນື່ອງ) 36 ຄົນ ແລະ ຕ່າງປະເທດ ຊ່ຽວຊານຂັ້ນ II ຈຳນວນ 01 ຄົນ, ປະລິນຍາເອກຈຳນວນ 04 ຄົນ
- ວຽກງານປະຕິຮູບການສຶກສາສາທາລະນະສຸກ ໄດ້ສຳເລັດກອງປະຊຸມຜ່ານ ແລະ ຮັບຮອງ ຫຼັກສູດຊັ້ນສູງພະຍາບານ ແລະ ການແພດ, ຫຼັກສູດອົບຮົມໄລຍະສັ້ນ (ພະຍາບານສິ່ງເຄື່ອງມື, ວາງຢາສະຫລົບ ແລະ ສັນລະຍະສາດ); ຈັດຕັ້ງການຮຽນການສອນ ຫຼັກສູດປະລິນຍາໂທການແພດເຂດຮ້ອນ ແລະ ສາທາລະນະສຸກລະຫ່ວາງຊາດ ໃຫ້ນັກສຶກສາລຸ້ນທີ່ 23 (ປີທີ່ 2) ແລະ ລຸ້ນທີ່ 24 (ປີທີ່ 1);ສຳເລັດຂໍ້ຕົກລົງວ່າດ້ວຍລະບົບພັດທະນາວິຊາຊີບຕໍ່ເນື່ອງ ສະບັບເລກທີ 355/ສທ ລົງວັນທີ 25 ເມສາ 2023; ຍົກລະດັບສະຖານການສຶກສາສາທາລະນະສຸກ 2 ແຫ່ງ ເປັນ ໂຮງຮຽນສາທາລະນະສຸກ( ອັດຕະປື ແລະ ສາລະວັນ);
- ສຳເລັດປະເມີນຄຸນນະພາບສະຖານການສຶກສາ ສາທາລະນະສຸກ ໂຮງຮຽນສາທາລະນະສຸກແຂວງວຽງຈັນ;
- ສຳເລັດການຄົ້ນຄວ້າວິທະຍາສາດຈຳນວນ 19 ໂຄງການ ແລະ 1 ບົດສະເໜີຄົ້ນຄ້ວາແນວຄິດ ໄກສອນພົມວິຫານ.

### 1.6. ແຜນງານແຜນການ ແລະ ການເງິນສາທາລະນະສຸກ:

- ເອົາໃຈໃສ່ຄຸ້ມຄອງວຽກງານແຜນການ-ການເງິນ ຂອງຂະແໜງການສາທາລະນະສຸກດ້ວຍຄວາມຮັບຜິດຊອບສູງ ເພື່ອຮັບປະກັນການຈັດຕັ້ງປະ ຕິບັດແຜນພັດທະນາສາທາລະນະສຸກ ໃຫ້ສໍາເລັດຕາມຄາດໝາຍ ໃນແຕ່ລະໄລຍະ, ໃນ 9 ເດືອນປີ 2024 ນີ້ໄດ້ສໍາເລັດຮ່າງແຜນພັດທະນາສາທາລະນະສຸກ 5 ປີ ຄັ້ງທີ X (2026-2030) ໂດຍໄດ້ກໍານົດຄາດໝາຍຕົວຊີ້ບອກ, ວຽກຈຸດສຸມບູລິມະສິດ ແລະ ຮ່າງແຜນງານຍ່ອຍ ແລະ ໂຄງການຕາມສາຍແຜນງານຂອງກະຊວງສາທາລະນະສຸກ; ສໍາເລັດແຜນງົບປະມານໄລຍະກາງ 2025-2027 ແລະ ນໍາສົ່ງກະຊວງການເງິນຊາບກ່ຽວງົບປະມານທີ່ຕ້ອງການເພື່ອຈັດຕັ້ງປະຕິບັດວຽກງານໃນໄລຍະດັ່ງກ່າວ; ສໍາເລັດດັດແກ້ງົບປະມານ 6 ເດືອນທ້າຍປີ 2024; ສໍາເລັດສະຫຼຸບສູນໂມງ ແລະ ສະຫຼຸບຂາດຕົວ ປະຈໍາປີ 2023 ແລະ ລົງຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດ-ການຄຸ້ມຄອງການເງິນ ຢູ່ບັນດາຫົວໜ່ວຍງົບປະມານທັງຢູ່ສູນກາງ ແລະ ທ້ອງຖິ່ນ, ສະຫຼຸບລາຍຈ່າຍ ປະຈໍາງວດ 1, ງວດ 2 ປີ 2024; ດໍາເນີນການເກັບກໍາຂໍ້ມູນແຟ້ມຄອບຄົວ ປີ 2024 ຢູ່ 4 ແຂວງເປົ້າໝາຍ (ແຂວງອຸດົມໄຊ, ແຂວງວຽງຈັນ, ໄຊຍະບູລີ ແລະ ຈໍາປາສັກ);
- ໄດ້ປັບປຸງ-ພັດທະນານິຕິກໍາ ແລະ ເຄື່ອງມື ໃຫ້ທັນສະໄໝ ເພື່ອຄຸ້ມຄອງການເງິນສາທາລະນະສຸກ ເຊິ່ງໄດ້ສໍາເລັດຄູ່ມືຄຸ້ມຄອງການການເງິນສາທາລະນະສຸກ (PFM) ແລະ ສໍາເລັດການອົບຮົມເນື້ອໃນຂອງຄູ່ມືດັ່ງກ່າວ ໃຫ້ 18 ແຂວງທົ່ວປະເທດ;
- ເອົາໃຈໃສ່ໃນການຄຸ້ມຄອງການຈັດຕັ້ງປະຕິບັດບັນດາໂຄງການ/ກິດຈະກໍາທີ່ນໍາໃຊ້ງົບປະມານລັດ ແລະ ODA ໂດຍໄດ້ສໍາເລັດບົດລາຍງານການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອທາງການເພື່ອການພັດທະນາ 6ເດືອນປີ 2024 ທັງສູນການ ແລະ ທ້ອງຖິ່ນ; ສໍາເລັດການສ້າງຄູ່ມືຄຸ້ມຄອງເງິນຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ຄາດວ່າຈະໄດ້ຈັດພິມເຜີຍແຜ່ໃນໄວໆນີ້; ສໍາເລັດການປິດໂຄງການ HANSA1 ແລະ ເຜີຍແຜ່ໂຄງການ HANSA 2 ຢ່າງເປັນທາງການ ແລະ ໂຄງການປັບປຸງຄຸນນະພາບບໍລິການດ້ວຍທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າ ຈາກ ADB;
- ໄດ້ສໍາເລັດບົດລາຍງານບັນຊີສາທາລະນະສຸກແຫ່ງຊາດ ປີ 2022; ລົງປະເມີນສະພາບການເງິນຂອງ 3 ໂຮງໝໍກຸ້ມຕົນເອງ ເພື່ອຖອດຖອນບົດຮຽນ ແລະ ຂະຫຍາຍໄປສູ່ໂຮງໝໍສູນກາງ ແລະ ໂຮງໝໍແຂວງ;
- ເອົາໃຈໃສ່ຄຸ້ມຄອງລະບົບປະກັນສຸຂະພາບ ໂດຍໄດ້ສໍາເລັດວຽກງານສໍາຄັນຄື:
  - ສໍາເລັດໂອນງົບປະມານບ້ວງປະກັນສຸຂະພາບ ທີ່ລັດຖະບານ ອະນຸມັດໃຫ້ສໍາລັບ ປີ 2024 ໃຫ້ບັນດາແຂວງທົ່ວປະເທດ ໄດ້ 96% ຂອງງົບປະມານທັງໝົດທີ່ອະນຸມັດ; ໄດ້ທົດລອງນໍາໃຊ້ລະບົບ E-Claim ສໍາເລັດ 3 ໂມດູນ (ການລົງທະບຽນຂອງສະມາຊິກ, ການໃຊ້ບໍລິການ, ການກວດຂໍ້ມູນເບື້ອງຕົ້ນ) ຢູ່ບາງແຂວງ;
  - ໄດ້ລົງຕິດຕາມ, ກວດກາການນໍາໃຊ້ງົບປະມານບ້ວງປະກັນສຸຂະພາບ ທີ່ໄດ້ໂອນໃຫ້ບັນດາແຂວງທົ່ວປະເທດໃນປີ ຜ່ານມາ ເຊິ່ງມາຮອດປະຈຸບັນສາມາດລົງກວດກາ, ປະເມີນແລ້ວຢູ່ 7 ແຂວງ;
  - ສໍາເລັດກອງປະຊຸມສ້າງຄວາມເຂັ້ມແຂງ ແລະ ຖອດຖອນບົດຮຽນ ຮ່ວມກັບຫ້ອງການປະກັນສຸຂະພາບແຂວງ ແລະ ສະຖານທີ່ບໍລິການໃນຂອບເຂດ ທົ່ວປະເທດ ປະຈໍາປີ 2024 (ຄັ້ງທີ 4);
  - ໄດ້ສົມທົບອົງການປະກັນສັງຄົມແຫ່ງຊາດ ເພື່ອທົບທວນສັນຍາກັບສະຖານທີ່ບໍລິການປິ່ນປົວ ແລະ ຄໍາແນະນໍາ 0476 ສະບັບປັບປຸງ;
  - ສໍາເລັດການພັດທະນາເວັບໄຊ ຂອງ ຫ້ອງການປະກັນສຸຂະພາບແຫ່ງຊາດ ເພື່ອນໍາໃຊ້ໃນການໃຫ້ຂໍ້ມູນຂ່າວສານ ແລະ ກວດການເກີດສິດຂອງສະມາຊິກກອງທຶນ;

- ສຳເລັດກອງປະຊຸມປຶກສາຫາລືກ່ຽວກັບການເກັບເງິນຄ່າຢາ ແລະ ອຸປະກອນການແພດ ຈາກສະມາຊິກປະກັນສັງຄົມ ທີ່ໄປໃຊ້ບໍລິການຢູ່ໂຮງໝໍສູນກາງ ແລະ ການປະຕິບັດສັນຍາ ເລກທີ 0230/ຫປກຊ, ລົງວັນທີ 29/03/2017;
- ໄດ້ຈັດກອງປະຊຸມຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບຂັ້ນສູນກາງ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການປັບປຸງນະໂຍບາຍການຈ່າຍຮ່ວມຂອງປະຊາຊົນຜູ້ມີເງື່ອນໄຂເວລາໄປໃຊ້ບໍລິການ ແລະ ສຳເລັດການຈັດກອງປະຊຸມກ່ຽວກັບການປັບປຸງອັດຕາທົດແທນ, ນະໂຍບາຍຈ່າຍຮ່ວມ;

### 1.7. ແຜນງານບໍລິຫານຄຸ້ມຄອງ ແລະ ກວດກາ:

- ສຳເລັດກອງປະຊຸມສາທາລະນະສຸກທົ່ວປະເທດ ປະຈຳປີ 2023 ທີ່ແຂວງຫົວພັນ;
- ເອົາໃຈໃສ່ວຽກພົວພັນປະສານງານຢູ່ສູນກາງ-ທ້ອງຖິ່ນ ແລະ ຄູ່ຮ່ວມພັດທະນາ, ປະເທດເພື່ອນມິດ ໂດຍໄດ້ສຳເລັດສະຫລຸບລາຍງານການຮ່ວມມືວຽກງານສາທາລະນະສຸກ ລະຫວ່າງ ສປປ ລາວ ແລະ ບັນດາປະເທດເພື່ອນມິດ
- ສຳເລັດໃນການເຜີຍແຜ່ວຽກງານການສ້າງຄວາມເຂັ້ມແຂງໃນການສ້າງເອກະສານທາງການຂອງກະຊວງສາທາລະນະສຸກ ໃຫ້ແກ່ບັນດາຂະແໜງສາທາລະນະສຸກ ໃນແຂວງພາກໄຕ້
- ເຜີຍແຜ່ໂຄສະນາການກັນພະຍາດ, ການບໍລິການປິ່ນປົວ, ການຄວບຄຸມພະຍາດຕິດຕໍ່ ແລະ ການພັດທະນາວຽກງານສາທາລະນະສຸກ ຈາກສູນກາງ ແລະ ທ້ອງຖິ່ນ ຜ່ານຊ່ອງທາງສື່ຕ່າງໆ ເຊິ່ງສາມາດຜະລິດລາຍການໂທລະພາບໄດ້ 72 ລາຍການ, ລາຍການວິທະຍຸໄດ້ 150 ລາຍ ການ, ລົງຂ່າວ ແລະ ສາລະໜ້າຮູ້ຕ່າງໆໄດ້ 900 ຄັ້ງ, ເກັບກຳຂ່າວໄດ້ທັງໝົດ 112 ຂ່າວ;
- ວຽກງານສ້າງຄວາມເຂັ້ມແຂງຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ໄດ້ສຳເລັດກອງປະຊຸມປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດວຽກງານ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ; ຮັບຮອງຮ່າງຄູ່ມືເຊື່ອມສານຄວາມສະເໝີພາບບົດບາດ ຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງຊຸມຊົນເຂົ້າໃນຂະແໜງການສາທາລະນະສຸກ ຮ່ວມກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ;

## 2. ຄວາມຄືບໜ້າການຈັດຕັ້ງປະຕິບັດ 11 ຕົວຊີ້ບອກ ໃນ 09 ເດືອນຕົ້ນປີ 2024

### ກ. ມີ 04 ຕົວຊີ້ບອກ ທີ່ສາມາດບັນລຸຄາດໝາຍໄດ້

1. ອັດຕາການຊົມໃຊ້ນ້ຳສະອາດ ໃນ 09 ເດືອນປີ 2024 ແມ່ນ 94,41% ຂອງປະຊາກອນທັງໝົດ (ຄາດໝາຍ 94%).
2. ອັດຕາການຊົມໃຊ້ວິດຖ່າຍຄອບຄົວ ໃນ 09 ເດືອນຕົ້ນປີ 2024 ແມ່ນ 97,13% (ຄາດໝາຍ 84%);
3. ອັດຕາການປົກຄຸມປະກັນສຸຂະພາບ ມາຮອດເດືອນ 09 ປີ 2024 ແມ່ນ 94,5% ຂອງປະຊາກອນທັງໝົດ (ຄາດໝາຍ 94,5%).
4. ອັດຕາການປະກາດຮັບຮອງເປັນບ້ານສາທາລະນະສຸກແບບຢ່າງ ມາຮອດເດືອນ 09 ປີ 2024 ແມ່ນ 92,03% ຂອງຈຳນວນບ້ານທັງໝົດ (ຄາດໝາຍ 84%).

**ຂ. ມີ 03 ຕົວຊີ້ບອກ ມີທ່າອ່ຽງຈະສາມາດບັນລຸຄາດໝາຍ**

1. ອັດຕາການຕາຍຂອງເດັກນ້ອຍລຸ່ມ 1 ປີ ໃນ 09 ເດືອນປີ 2024 ແມ່ນ 6,77/1.000 ຄົນ ຂອງເດັກນ້ອຍເກີດມີຊີວິດ (ຄາດໝາຍ 22/1.000);
2. ອັດຕາການຕາຍຂອງເດັກນ້ອຍລຸ່ມ 5 ປີ ໃນ 09 ເດືອນປີ 2024 ແມ່ນ 7,81/1.000 ຄົນ ຂອງເດັກນ້ອຍເກີດມີຊີວິດ (ຄາດໝາຍ 32/1.000);
3. ອັດຕາສ່ວນການຕາຍຂອງແມ່ ໃນ 09 ເດືອນປີ 2024 ແມ່ນ 36,24/100.000 ຄົນ ຂອງເດັກນ້ອຍເກີດມີຊີວິດ (ຄາດໝາຍ 120/100.000).

**ຄ. ມີ 04 ຕົວຊີ້ບອກ ມີທ່າອ່ຽງຈະບໍ່ສາມາດບັນລຸຄາດໝາຍ**

1. ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີນໍ້າໜັກຕໍ່າກວ່າມາດຕະຖານ ແມ່ນ 24,3% (ອີງຕາມຜົນການສຳຫຼວດດັດສະນີໝາຍສັງຄົມລາວ, LSIS III), ສົມທຽບໃສ່ຄາດໝາຍປີ 2024 ແມ່ນ 16% ຂອງປະຊາກອນເປົ້າໝາຍ;
2. ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີລວງສູງຕໍ່າກວ່າມາດຕະຖານ ແມ່ນ 32,8% (ອີງຕາມຜົນການສຳຫຼວດດັດສະນີໝາຍສັງຄົມລາວ,LSIS III), ສົມທຽບໃສ່ຄາດໝາຍປີ 2024 ແລ້ວແມ່ນ 28% ຂອງປະຊາກອນເປົ້າໝາຍ;
3. ອັດຕາການເກີດລູກມີແພດຊ່ວຍ ໃນ 09 ເດືອນປີ 2024 ສາມາດປະຕິບັດໄດ້ 60,33% ຂອງປະຊາກອນກຸ່ມເປົ້າໝາຍ (ຄາດໝາຍ 84%);
4. ອັດຕາການໃຫ້ວັກຊີນກັນພະຍາດ Penta 3 ໃນ 09 ເດືອນປີ 2024 ສາມາດປະຕິບັດໄດ້ 64,87% ຂອງປະຊາກອນກຸ່ມເປົ້າໝາຍ (ຄາດໝາຍ 95%).

## II. ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ໃນ 09 ເດືອນຕົ້ນປີ 2024

ອີງຕາມການແຜນງົບປະມານປັບປຸງທ້າຍປີ 2024 ຈາກກະຊວງການເງິນ ແລະ ຕົວເລກອະນຸມັດແຜນການລົງທຶນຂອງລັດຈາກກະຊວງແຜນການ ແລະ ການລົງທຶນ, ໃນ ປີ 2024 ຂະແໜງສາທາລະນະສຸກ (ລວມທັງຂັ້ນສູນກາງ ແລະ ທ້ອງຖິ່ນ ແລະ ງົບປະມານລັດຖະບານ ແລະ ODA) ໄດ້ຮັບງົບປະມານທັງໝົດແມ່ນ ***3,402.38 ຕື້ກີບ***, ໃນນັ້ນ ງົບປະມານປົກກະຕິ ແມ່ນ ***1,396.31 ຕື້ກີບ*** , ງົບປະມານຈາກ ຄ່າບໍລິການວິຊາການແມ່ນ ***793.31 ຕື້ກີບ*** ແລະ ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ແມ່ນ ***1,136,98 ຕື້ກີບ.***

1. ການຈັດຕັ້ງປະຕິບັດງົບປະມານຂອງຂະແໜງສາທາລະນະສຸກ ໃນ 9 ເດືອນປີ 2024 ລວມທັງຂັ້ນສູນກາງ ແລະ ທ້ອງຖິ່ນ

- ❖ ສາມາດສະຫຼຸບສັງລວມຄວາມຄືບໜ້າການຈັດຕັ້ງປະຕິບັດລາຍຈ່າຍງົບປະມານ**ປົກກະຕິ ແລະ ຄ່າບໍລິການ** ໄດ້ທັງໝົດແມ່ນ 1,324.33 ຕື້ກີບ ທຽບໃສ່ແຜນປັບປຸງໝົດປີແມ່ນເທົ່າກັບ 58,46% ແລະ ເມື່ອທຽບໃສ່ແຜນອະນຸມັດແມ່ນ 75,15%.

2. ການຈັດຕັ້ງປະຕິບັດງົບປະມານຂອງຂະແໜງສາທາລະນະສຸກ ໃນ 9 ເດືອນປີ 2024 ສະເພາະຂັ້ນສູນກາງ

- ❖ ການຈັດຕັ້ງປະຕິບັດງົບປະມານລວມຂອງຂັ້ນສູນກາງ (ກະຊວງສາທາລະນະສຸກ) ສາມາດສະຫຼຸບສັງລວມຄວາມຄືບໜ້າການຈັດຕັ້ງປະຕິບັດລາຍຈ່າຍງົບປະມານ**ປົກກະຕິ ແລະ ຄ່າບໍລິການ** ໄດ້ທັງໝົດແມ່ນ 560.09 ຕື້ກີບ ທຽບໃສ່ແຜນປັບປຸງໝົດປີແມ່ນເທົ່າກັບ 47,79% ແລະ ເມື່ອທຽບໃສ່ແຜນອະນຸມັດແມ່ນ 56,63%;
- ❖ ສະເພາະການຈັດຕັ້ງປະຕິບັດລາຍຈ່າຍງົບປະມານ**ປົກກະຕິ** ສາມາດປະຕິບັດ ໄດ້ທັງໝົດແມ່ນ 318.69 ຕື້ກີບ ທຽບໃສ່ແຜນປັບປຸງໝົດປີແມ່ນເທົ່າກັບ 53,84% ແລະ ເມື່ອທຽບໃສ່ແຜນອະນຸມັດແມ່ນ 65,22%;
- ❖ ສະເພາະການຈັດຕັ້ງປະຕິບັດລາຍຈ່າຍງົບປະມານ**ຄ່າບໍລິການ** ສາມາດປະຕິບັດ ໄດ້ທັງໝົດແມ່ນ 241.12 ຕື້ກີບ ທຽບໃສ່ແຜນປັບປຸງໝົດປີແມ່ນເທົ່າກັບ 41,61% ແລະ ເມື່ອທຽບໃສ່ແຜນອະນຸມັດແມ່ນ 48,23%;
- ❖ ສໍາລັບການຈັດຕັ້ງປະຕິບັດງົບປະມານທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ໃນ 9 ເດືອນປີ 2024 ໂດຍລວມທັງໝົດສາມາດປະຕິບັດໄດ້ 643,82 ຕື້ກີບ ທຽບໃສແຜນປີແມ່ນເທົ່າກັບ 57% ໃນນີ້ສະເພາະທຶນກູ້ຢືມສາມາດປະຕິບັດໄດ້ 247,45 ຕື້ກີບ ເທົ່າກັບ 74% ແລະ ທຶນຊ່ວຍເຫຼືອລ້າ ສາມາດປະຕິບັດໄດ້ 396,37 ຕື້ກີບ, ເທົ່າກັບ 49,38% ຂອງແຜນປີ.

## III. <u>**ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ:**</u>

ການຈັດຕັ້ງປະຕິບັດວຽກງານສາທາລະນະສຸກ ໃນ 09 ເດືອນຕົ້ນປີ 2024 ມີບາງຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ ດັ່ງລຸ່ມນີ້:

1) ມີການລະບາດຂອງພະຍາດໄຂ້ເລືອດອອກ ແລະ ບາງພະຍາດຢູ່ບັນດາແຂວງ, ມີໄພທໍາມະຊາດນໍ້າຖ້ວມ ເຮັດໃຫ້ພື້ນຖານໂຄງລ່າງ, ຢາ, ອຸປະກອນການແພດ ຢູ່ຫຼາຍແຂວງຖືກທໍາລາຍ ສ້າງຄວາມຫຍຸ້ງຍາກ, ສິ່ງທ້າທາຍຢ່າງຫຼວງຫຼາຍໃຫ້ຂະແໜງສາທາລະນະສຸກ;
2) ເຖິງແມ່ນວ່າໄດ້ມີຄວາມພະຍາຍາມແກ້ໄຂບັນໜີ້ສິນຄົງຄ້າງໃນການຈັດຊື້ຢາ-ອຸປະກອນການແພດ ແຕ່ຍັງບໍ່ທັນສາມາດແກ້ໄຂໄດ້ຢ່າງຂາດຕົວ;
3) ບຸກຄະລາກອນສາທາລະນະສຸກ ຍັງມີຄວາມຈໍາກັດທາງດ້ານປະລິມານ ແລະ ຄຸນນະພາບ ໂດຍສະເພາະ ຢູ່ໂຮງໝໍເມືອງ ແລະ ສຸກສາລາ, ພະນັກງານຈໍານວນໜຶ່ງໄດ້ລາອອກຈາກການເປັນລັດຖະກອນ ເຮັດໃຫ້ຈໍານວນພະນັກງານຫຼຸດລົງທັງຢູ່ສູນກາງ ແລະ ທ້ອງຖິ່ນ
4) ການຈັດຕັ້ງປະຕິບັດນະໂຍບາຍ 5 ດີ 1 ພໍໃຈ ເຂົ້າໃນການປັບປຸງຄຸນນະພາບການບໍລິການຂອງສະຖານທີ່ບໍລິການສຸຂະພາບ ຍັງບໍ່ໄດ້ດີ ແລະ ເປັນຮູບປະທໍາ;
5) ການວາງແຜນແບບເຊື່ອມສານລະຫວ່າງພາກລັດ ແລະ ຄູ່ຮ່ວມພັດທະນາ, ການຈັດຕັ້ງປະຕິບັດວຽກງານບູລິມະສິດ ເພື່ອການບັນລຸຄາດໝາຍຕ່າງໆທັງຢູ່ສູນກາງ ແລະ ທ້ອງຖິ່ນ ຍັງບໍ່ໄດ້ດີເທົ່າທີ່ຄວນ.

## IV. **ທິດທາງແຜນພັດທະນາສາທາລະນະສຸກ ປະຈໍາປີ 2025**

### 1. <u>**ຄາດໝາຍສູ້ຊົນຕົ້ນຕໍ ປະຈໍາປີ 2025**</u>

1) ອັດຕາເດັກນ້ອຍລຸ່ມ 05 ປີ ທີ່ມີນໍ້າໜັກຕໍ່າກວ່າມາດຕະຖານໃຫ້ຍັງເຫຼືອ 15% ຂອງປະຊາກອນກຸ່ມເປົ້າໝາຍ;

2) ອັດຕາເດັກນ້ອຍລຸ່ມ 05 ປີ ທີ່ມີລວງສູງຕ່ຳກວ່າມາດຕະຖານໃຫ້ຍັງເຫຼືອ 27%ຂອງປະຊາກອນກຸ່ມເປົ້າໝາຍ;

3) ອັດຕາການຕາຍຂອງເດັກນ້ອຍລຸ່ມ 01 ປີ ໃຫ້ຍັງເຫຼືອ 20 ຕໍ່ 1.000 ເດັກເກີດມີຊີວິດ;

4) ອັດຕາການຕາຍຂອງເດັກນ້ອຍລຸ່ມ 05 ປີ ໃຫ້ຍັງເຫຼືອ 30 ຕໍ່ 1.000 ເດັກເກີດມີຊີວິດ;

5) ອັດຕາສ່ວນການ ຕາຍຂອງແມ່ ໃຫ້ຍັງເຫຼືອ 110 ຕໍ່ 100.000 ເດັກເກີດມີຊີວິດ;

6) ອັດຕາເກີດລູກມີແພດຊ່ວຍ ໃຫ້ໄດ້ 85% ຂອງປະຊາກອນເປົ້າໝາຍ;

7) ອັດຕາໃຫ້ວັກຊີນກັນພະຍາດໃນເດັກລຸ່ມ 01 ປີ ໃຫ້ໄດ້ 95% ຂອງປະຊາກອນກຸ່ມເປົ້າໝາຍ;

8) ອັດຕາຊົມໃຊ້ນ້ຳສະອາດ ໃຫ້ໄດ້ 95% ຂອງປະຊາກອນທັງໝົດ;

9) ອັດຕາຊົມໃຊ້ວິດຖ່າຍຄອບຄົວ ໃຫ້ໄດ້ 85% ຂອງຄອບຄົວທັງໝົດ;

10) ອັດຕາປົກຄຸມປະກັນສຸຂະພາບທົ່ວປວງຊົນ ໃຫ້ໄດ້ 94,5% ຂອງປະຊາກອນທັງໝົດ;

11) ອັດຕາການປະກາດ & ຮັບຮອງບ້ານສາທາລະນະສຸກແບບຢ່າງ ໃຫ້ໄດ້ 85% ຂອງຈຳນວນບ້ານທັງໝົດ.

## 2. <u>ວຽກຈຸດສຸມ ຕາມສາຍແຜນງານ</u>

ເພື່ອແນ່ໃສ່ການຍົກສູງຄຸນນະພາບການບໍລິການ ແລະ ໃຫ້ສາມາດບັນລຸບັນດາຄາດໝາຍທີ່ຕິດພັນກັບຂະແໜງສາທາລະນະສຸກ ໃນປີ 2025, ກະຊວງສາທາລະນະສຸກ ຈະໄດ້ສຸມໃສ່ຈັດຕັ້ງປະຕິບັດບັນດາວຽກບູລິມະສິດ ທີ່ຕິດພັນກັບບັນດາສາຍແຜນງານ ຄືດັ່ງຕໍ່ໄປນີ້:

### 1) **ວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ**

- ສືບຕໍ່ຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດ ແລະ ແຜນປະຕິບັດງານ ສຳລັບການບໍລິການແບບເຊື່ອມສານສຸຂະພາບຈະເລີນພັນ, ແມ່, ເດັກເກີດ ແລະ ເດັກນ້ອຍ ແລະ ຍຸດທະສາດໂພຊະນາການ ໂດຍສຸມໃສ່ບັນດາແຂວງ, ເມືອງ ແລະ ສຸກສາລາ ທີ່ຍັງຫຍຸ້ງຍາກ ດ້ອຍທັງວິຊາການ, ງົບປະມານ ແລະ ເງື່ອນໄຂຄວາມສະດວກດ້ານຕ່າງໆ ພ້ອມທັງລະດົມການມີສ່ວນຮ່ວມຂອງອຳນາດການປົກຄອງ ແລະ ຊຸມຊົນທ້ອງຖິ່ນໃຫ້ຫຼາຍຂຶ້ນ;
- ປຸກລະດົມຊຸມຊົນເຂົ້າຮ່ວມວຽກ ຮສຂ ໂດຍການເປັນເຈົ້າການຂອງອາສາສະໝັກບ້ານ (ອສບ) ແລະ ຄະນະກຳມະການສຸຂະພາບບ້ານ (ຄສບ) ໃນການສ້າງບ້ານສາທາລະນະສຸກແບບຢ່າງ ໃຫ້ກາຍເປັນພາລະກິດຂອງຊຸມຊົນໂດຍຊຸມຊົນເພື່ອຊຸມຊົນ ຢ່າງແທ້ຈິງ;
- ສືບຕໍ່ຜັນຂະຫຍາຍວຽກ CONNECT "ຕະລຸມບອນ" ເຊື່ອມສານວຽກງານດັ່ງກ່າວເຂົ້າໃນການຊຸກຍູ້ວຽກປົກກະຕິຂອງຂະແໜງການ ເພື່ອເພີ່ມອັດຕາປົກຄຸມຂອງການໃຫ້ວັກຊີນກັນພະຍາດ, ການເກີດລູກມີແພດຊ່ວຍ;

### 2) **ວຽກງານກັນພະຍາດ ແລະ ຄວບຄຸມພະຍາດຕິດຕໍ່**

- ສືບຕໍ່ສຸມໃສ່ສ້າງຄວາມສາມາດໃນການຕິດຕາມ, ເຝົ້າລະວັງ, ການປະເມີນຄວາມສ່ຽງ ແລະ ໂຕ້ຕອບເຫດການສຸກເສີນດ້ານສາທາລະນະສຸກ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ;
- ເສີມສ້າງຄວາມເຂັ້ມແຂງວຽກງານຈຸດຜ່ານແດນ, ວຽກງານວິເຄາະ ແລະ ລະບາດວິທະຍາໃນແຕ່ລະຂັ້ນ;

– ສືບຕໍ່ສ້າງນັກລະບາດວິທະຍາພາກສະໜາມໃຫ້ໄດ້ຕາມເປົ້າໝາຍທີ່ວາງໄວ້; ສືບຕໍ່ກະກຽມລົບລ້າງພະຍາດທີ່ເປັນບັນຫາດ້ານສາທາລະ ນະສຸກຄື: ພະຍາດໃບໄມ້ໃນເລືອດ ປີ 2025, ຮັບປະກັນການຄວບຄຸມ ແລະ ການເຂົ້າເຖິງບໍລິການປິ່ນປົວພະຍາດວັນນະໂລກ, ພະຍາດເອດ ແລະ ພຕພ, ພະຍາດໄຂ້ມາລາເລຍ;

3) **ວຽກງານປິ່ນປົວ ແລະ ຟື້ນຟູໜ້າທີ່ການ:**

– ສືບຕໍ່ປັບປຸງຍົກລະດັບການບໍລິການຂອງໂຮງໝໍຂັ້ນຕ່າງໆໃຫ້ມີຄຸນນະພາບ ຕາມນະໂຍບາຍ ແລະ ມາດຕະຖານທີ່ກະຊວງໄດ້ວາງອອກ ດ້ວຍການຍົກລະດັບພື້ນຖານໂຄງລ່າງໃຫ້ໄດ້ມາດຖານ, ປະກອບຢາ, ອຸປະກອນການແພດທີ່ຈຳເປັນ, ປັບປຸງການບໍລິການຕາມນະໂຍ ບາຍ 5 ດີ, 1 ພໍໃຈ ໃຫ້ມີຮູບປະທຳ ແລະ ມີຜົນສຳເລັດ;

– ສືບຕໍ່ດຳເນີນການປະເມີນການເຮັດທົດລອງຫັນໂຮງໝໍກຸ້ມຕົນເອງດ້ານການເງິນຂອງ 3 ໂຮງໝໍ ແລະ ຂະຫຍາຍໄປສູ່ໂຮງໝໍອື່ນທີ່ມີຄວາມພ້ອມ ແນ່ໃສ່ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງການເງິນ, ຫຼຸດຜ່ອນການເພິ່ງພາຈາກງົບປະມານຂອງພາກລັດ;

– ສ້າງຄວາມເຂັ້ມແຂງລະບົບສິ່ງຕໍ່ຄົນເຈັບ ແລະ ການຫຼຸດຜ່ອນບັນຫາພະຍາດບໍ່ຕິດຕໍ່ ໃຫ້ຈະແຈ້ງດີກວ່າເກົ່າ; ເອົາໃຈໃສ່ຄຸ້ມຄອງບັນດາໂຮງໝໍ ແລະ ຫ້ອງກວດພະຍາດເອກະຊົນ ຕາມລະບຽບການໃຫ້ດີກວ່າເກົ່າ.

4) **ວຽກງານປົກປ້ອງຜູ້ບໍລິໂພກອາຫານ, ຢາ ແລະ ຜະລິດຕະພັນການແພດ:**

– ສືບຕໍ່ສ້າງກົດໝາຍວ່າດ້ວຍວ່າດ້ວຍຊັບພະຍາກອນທີ່ເປັນຢາໃຫ້ສຳເລັດ, ປັບປຸງນິຕິກຳລຸ່ມກົດໝາຍ, ຄູ່ມື ແລະ ຂັ້ນຕອນການປະຕິບັດການອະນຸຍາດ ຈຳນວນໜຶ່ງ ໃຫ້ກະທັດຮັດຄົບຖ້ວນ ແລະ ສອດຄ່ອງ;

– ເພີ່ມທະວີການຕິດຕາມຄຸນນະພາບ ແລະ ເຝົ້າລະວັງຄວາມປອດໄພ ຂອງອາຫານ, ຢາ ແລະ ຜະລິດຕະພັນການແພດ ນັບແຕ່ຂອດຂອງການນຳເຂົ້າ, ຜະລິດ, ຈໍລະຈອນແຈກຢາຍ ເພື່ອຈຳກັດ ການນຳເຂົ້າອາຫານ, ຢາ ແລະ ຜະລິດຕະພັນການແພດ ທີ່ບໍ່ຖືກຕ້ອງ, ຕົກມາດຕະຖານ; ບຳລຸງຮັກສາມາດຕະຖານ ISO 17025 ຂອງສູນວິໄຈອາຫານ ແລະ ຢາ ແຫ່ງຊາດ;

– ສືບຕໍ່ພັດທະນາໃຫ້ສູນ ໄດ້ຮັບຮອງມາດຕະຖານຄຸນນະພາບຈາກອົງການອະນາໄມໂລກ (WHO PQ); ປັບປຸງ ແລະ ພັດທະນາ ໜ່ວຍງານວິໄຈ ຂອງບັນດາແຂວງ ໃຫ້ສາມາດວິໄຈຄຸນນະພາບຂອງອາຫານ ແລະ ຢາ ຂັ້ນພື້ນຖານໄດ້;

– ປັບປຸງລະບົບການສະໜອງຢາ ໃນແຕ່ລະຂັ້ນໃຫ້ສອດຄ່ອງຕາມກົດໝາຍ ເປັນເອກະພາບ ແລະ ໂປ່ງໃສ; ພັດທະນາ ແລະ ນຳໃຊ້ລະບົບໄອທີທີ່ທັນສະໄໝ ເຂົ້າໃນວຽກງານການອະນຸຍາດ ເຊັ່ນ: ການຂຶ້ນທະບຽນ, ການນຳເຂົ້າ-ສົ່ງອອກ, ສິ່ງຜ່ານອາ ຫານ, ຢາ ແລະ ຜະລິດຕະພັນການແພດ ລວມທັງ ເຄື່ອງສຳອາງ, ເຄມີຄວບຄຸມ, ສານອອກລິດຕໍ່ຈິດ-ປະສາດ ໃຫ້ເປັນລະບົບ ໄອທີ ທີ່ທັນສະໄໝ.

5) **ວຽກງານຄຸ້ມຄອງ, ພັດທະນາພະນັກງານ ແລະ ຄົ້ນຄວ້າວິທະຍາສາດສາທາລະນະສຸກ:**

– ສືບຕໍ່ຄຸ້ມຄອງ, ນຳໃຊ້ ປະຕິບັດນະໂຍບາຍ ຕໍ່ພະນັກງານ ສາທາລະນະສຸກ ແລະ ປັບປຸງກົງຈັກການຈັດຕັ້ງສາທາລະນະສຸກ ໃຫ້ມີປະສິດທິພາບ;

– ສຸມໃສ່ຕິດຕາມ ຊຸກຍູ້ການນຳໃຊ້ລະບົບ ແລະ ປັບປຸງຂໍ້ມູນພະນັກງານ-ລັດຖະ ກອນ ແລະ ພະນັກງານສັນຍາຈ້າງ-ອາສະໝັກ ໃຫ້ຖືກຕ້ອງຊັດເຈນ,;

– ສ້າງແຜນຄາດຄະເນຄວາມຕ້ອງການບັນຈຸລັດຖະກອນໃໝ່ປະຈໍາປີ, ສ້າງບົດລາຍງານການແຈກຢາຍພະນັກງານ ປະຈໍາປີ ໂດຍ ແຍກເພດ, ເຜົ່າ, ເຂດຫ່າງໄກສອກຫຼີກ, ສຸມໃສ່ເພີ່ມສັດສ່ວນ ແພດ, ພະຍາບານ, ຜະດຸງຄັນ ທີ່ມີຄຸນນະພາບໃນສະຖານທີ່ບໍລິການ;

– ສ້າງແຜນຄວາມຕ້ອງການກໍ່ສ້າງແພດຊ່ຽວຊານຂອງໂຮງໝໍແຕ່ລະຂັ້ນຢ່າງລະອຽດ ແລະ ສຸມໃສ່ອົບຮົມ, ກໍ່ສ້າງໄລຍະສັ້ນ, ຍາວ ທັງຢູ່ພາຍໃນ ແລະ ຕ່າງປະເທດ.

6) **ວຽກງານ ແຜນການ ແລະ ການເງິນສາທາລະນະສຸກ:**

– ປັບປຸງ ເຄື່ອງມື, ຂໍ້ແນະນໍາ ແລະ ອົບຮົມສ້າງຄວາມສາມາດໃນການສ້າງແຜນພັດທະນາສາທາລະນະສຸກ, ການຕິດຕາມ, ຊຸກຍູ້, ກວດກາ ປະເມີນຜົນ ວຽກງານແຜນການ-ການເງິນ ໃຫ້ຜູ້ຮັບຜິດຊອບຢູ່ແຕ່ລະຂັ້ນ;

– ເພີ່ມທະວີຄວາມເປັນເຈົ້າການໃນການພົວພັນ, ປະສານງານ ກັບທຸກພາກສ່ວນ ທັງຢູ່ສູນກາງ ແລະ ທ້ອງຖິ່ນ, ບັນດາຄູ່ຮ່ວມພັດທະນາ ແລະ ພາກສ່ວນເອກະຊົນ ເພື່ອສ້າງແຜນພັດທະນາສາທາລະນະສຸກແບບເຊື່ອມສານທັງຢູ່ສູນກາງ ແລະ ທ້ອງຖິ່ນໃຫ້ມີຄຸນນະພາບ;

– ສ້າງເງື່ອນໄຂ ແລະ ປະຕິບັດກົນໄກກຸ້ມຕົນເອງເທື່ອລະກ້າວຂອງບາງໂຮງໝໍຂັ້ນສູນກາງ ແລະ ແຂວງຈໍານວນໜຶ່ງ; ເອົາໃຈໃສ່ໃນການຄຸ້ມຄອງການຈັດຕັ້ງປະຕິບັດບັນດາໂຄງການ/ກິດຈະກໍາ ທີ່ນໍາໃຊ້ງົບປະມານລັດ ແລະ ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ເກີດຜົນປະໂຫຍດສູງສຸດ;

– ເອົາໃຈໃສ່ຄຸ້ມຄອງຊັບສິນຂອງລັດຂອງຣັດກຸມ ແລະ ມີປະສິດຕິຜົນ;

– ເອົາໃຈໃສ່ປັບປຸງ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດກອງທຶນປະກັນສຸຂະພາບແຫ່ງຊາດໃຫ້ມີປະສິດທິພາບ, ປະສິດທິຜົນດີຍິ່ງຂຶ້ນ.

7) **ວຽກງານບໍລິຫານຄຸ້ມຄອງ ແລະ ກວດກາ:**

– ສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດຍຸດທະສາດປະຕິຮູບສາທາລະນະສຸກ ຢ່າງແຂງແຮງ, ປັບປຸງກົນໄກຄຸ້ມຄອງຜ່ານປະຕູດຽວ ແລະ ແບບແຜນວິທີເຮັດວຽກຢ່າງມີແຜນການ ແລະ ຫຼຸດຜ່ອນຫຼາຍຂັ້ນຫຼາຍຂອດໂດຍການນໍາໃຊ້ IT ເຂົ້າໃນການບໍລິຫານຄຸ້ມຄອງ;

– ຄົ້ນຄວ້າບັນດາເອກະສານສັນຍາຮ່ວມມືກັບບັນດາປະເທດເພື່ອນມິດ ແລະ ຄູ່ຮ່ວມພັດທະນາ ພ້ອມທັງຄຸ້ມຄອງບັນອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGO, INGO) ໃຫ້ມີປະສິດຕິຜົນດີ;

– ຊຸກຍູ້ສົ່ງເສີມວຽກສະເໝີພາບບົດບາດຍິງຊາຍ ໂດຍຈັດຕັ້ງປະຕິບັດ“ຍຸດທະສາດເພື່ອຄວາມສະເໝີພາບຍິງຊາຍ ແລະ ແມ່-ເດັກ ຂອງຂະແໜງສາທາລະນະສຸກ (2019-2025).

## V. ຄາດຄະເນຄວາມຕ້ອງການດ້ານງົບປະມານ ສໍາລັບປີ 2025

ແຜນພັດທະນາສາທາລະນະສຸກ ປະຈໍາປີ 2025 ໄດ້ຄາດຄະເນຄວາມຕ້ອງການງົບປະມານລວມທັງໝົດແມ່ນ 3,297 ຕື້ກີບ ໃນນີ້, ຄວາມຕ້ອງການງົບປະມານລັດຖະບານແມ່ນ 2,609 ຕື້ກີບ ແລະ ຄາດຄະເນງົບປະມານທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ແມ່ນ 687 ຕື້ກີບ ເຊິ່ງແມ່ນຕົວເລກຄວາມຕ້ອງການດ້ານງົບປະມານຕາມສາຍແຜນງານຂອງກະຊວງສາທາລະນະສຸກ (ພາກ 62-67). ລາຍລະອຽດ ລຸ່ມນີ້:

| ແຜນງານ | ລວມທັງໝົດ | | ລັດຖະບານ | | ODA | |
|---|---|---|---|---|---|---|
| | ງົບປະມານ (ກີບ) | ຈໍານວນກິດຈະກໍາ | ງົບປະມານ (ກີບ) | ຈໍານວນກິດຈະກໍາ | ງົບປະມານ (ກີບ) | ຈໍານວນກິດຈະກໍາ |
| ອະນາໄມ ແລະ ສົ່ງເສີມສຸຂະພາບ | 122,770,500,000 | 141 | 114,923,000,000 | 133 | 7.847.500.000 | 8 |
| ກັນພະຍາດ ແລະ ຄວບຄຸມພະຍາດຕິດຕໍ່ | 275,366,634,209 | 305 | 126,705,648,536 | 203 | 148.660.985.673 | 102 |
| ປິ່ນປົວ ແລະ ຟື້ນຟູໜ້າທີ່ການ | 2,854,435,763,613 | 202 | 1,006,667,890,000 | 188 | 467.767.873.613 | 14 |
| ປົກປ້ອງຜູ້ບໍລິໂພກອາຫານ, ຢາ ແລະ ຜະລິດຕະພັນການແພດ | 43,079,153,768 | 166 | 31,909,153,768 | 121 | 11.170.000.000 | 45 |
| ຄຸ້ມຄອງ, ພັດທະນາພະນັກງານ ແລະ ຄົ້ນຄວ້າວິທະຍາສາດສາທາລະນະສຸກ | 922,309,241,261 | 491 | 896,477,020,261 | 448 | 25.832.221.000 | 43 |
| ແຜນການ ແລະ ການເງິນ | 441,754,880,501 | 115 | 416,082,767,800 | 35 | 25.672.112.701 | 80 |
| ບໍລິຫານຄຸ້ມຄອງ ແລະ ກວດກາ | 17,291,783,839 | 103 | 16,891,783,839 | 102 | 400.000.000 | 1 |
| ***ລວມທັງໝົດ*** | ***3.297.007.957.191*** | ***1,523*** | ***2,609,657,264,204*** | ***1,230*** | ***687.350.692.987*** | ***293*** |

## VI. ຂໍ້ສະເໜີ

– ສະເໜີບັນດາຄູ່ຮ່ວມພັດທະນາສືບຕໍ່ປະສານງານ-ສະໜັບສະໜູນຂະແໜງການສາທາລະນະສຸກ ໃນການກໍານົດບັນດາວຽກງານບູລິມະສິດ ແລະ ການສະໜອງງົບປະມານ ເພື່ອສຸມໃສ່ບັນດາຄາດໝາຍທີ່ບໍ່ບັນລຸ, ການບໍລິການຮັກສາສຸຂະພາບ ຢູ່ເຂດຊົນນະບົດ ຫ່າງໄກສອກຫຼີກ ໂດຍຜ່ານກົນໄກ TWG.

ລັດຖະມົນຕີ